ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ພັກປະຊາຊົນປະຕິວັດລາວ
ຄະນະເລຂາທິການສູນກາງພັກ

ເລກທີ 11/ຄລສພ
ນະຄອນຫຼວງວຽງຈັນ, ວັນທີ 21 ສິງຫາ 2019

# ຄໍາສັ່ງແນະນໍາ

## ຂອງຄະນະເລຂາທິການສູນກາງພັກ
## ວ່າດ້ວຍການຄາດຄະເນແບ່ງຄວາມຮັບຜິດຊອບ ຂອງຄະນະປະຈໍາພັກແຕ່ລະຂັ້ນ

ເຖິງ: ຄະນະປະຈໍາພັກກະຊວງ-ອົງການ, ແຂວງ-ນະຄອນຫຼວງ, ເມືອງ-ນະຄອນໃນທົ່ວປະເທດ

- ອີງຕາມ ກົດລະບຽບພັກປະຊາຊົນປະຕິວັດລາວ ສະໄໝທີ X;
- ອີງຕາມ ມະຕິ ຂອງກົມການເມືອງສູນກາງພັກ ສະບັບເລກທີ 031/ກມສພ, ລົງວັນທີ 02 ມັງກອນ 2018 ວ່າດ້ວຍວຽກງານຄຸ້ມຄອງພະນັກງານ.

ໃນໄລຍະຜ່ານມາພັກເຮົາໄດ້ຖືສໍາຄັນ ແລະ ເອົາໃຈໃສ່ປັບປຸງແບບແຜນການນໍາພາ ແລະ ວິທີເຮັດວຽກຂອງພັກ ໃຫ້ມີຄວາມສອດຄ່ອງແຕ່ລະໄລຍະ ໂດຍສະເພາະແມ່ນການແບ່ງງານ, ແບ່ງຄວາມຮັບຜິດຊອບໃຫ້ສະມາຊິກພັກ, ຄະນະບໍລິຫານງານພັກ, ຄະນະປະຈໍາພັກແຕ່ລະຂັ້ນ, ເຊິ່ງແຕ່ລະສະຫາຍໄດ້ເຊີດຊູຄວາມຮັບຜິດຊອບ ແລະ ເສີມຂະຫຍາຍຄວາມເປັນເຈົ້າການ ໃນການນໍາພາ-ຊີ້ນໍາຈັດຕັ້ງປະຕິບັດໜ້າທີ່ການເມືອງທີ່ໄດ້ຮັບມອບໝາຍ. ດັ່ງນັ້ນ, ເພື່ອສືບຕໍ່ເຮັດຫຼອນໜ້າທີ່ ແລະ ຄວາມຮຽກຮ້ອງຕ້ອງການໜ້າທີ່ການເມືອງໃນໄລຍະໃໝ່ ຄະນະພັກແຕ່ລະຂັ້ນ, ບຸກຄົນພາຍໃນຄະນະພັກ ຕ້ອງເພີ່ມທະວີການແບ່ງງານ, ແບ່ງຄວາມຮັບຜິດຊອບໃຫ້ເໝາະສົມກວ່າເກົ່າ ໂດຍເພີ່ມທະວີການແບ່ງງານໃນວຽກງານພັກ, ປົກປັກຮັກສາ, ອໍານາດການປົກຄອງ, ແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນ ໃຫ້ສົມເຫດສົມຜົນ. ດັ່ງນັ້ນ, ຄະນະເລຂາທິການສູນກາງພັກ ຈຶ່ງອອກຄໍາສັ່ງແນະນໍາດັ່ງນີ້:

1. ຈໍານວນກໍາມະການປະຈໍາພັກກະຊວງ-ອົງການ, ແຂວງ-ນະຄອນຫຼວງ ແລະ ເມືອງ-ນະຄອນ ໃຫ້ປະຕິບັດຕາມກົດລະບຽບຂອງພັກໃຫ້ມີຈໍານວນບໍ່ເກີນ 1/3 ຂອງຄະນະບໍລິຫານງານພັກຂັ້ນຕົນ, ໃນນີ້ໃຫ້ມີຮອງເລຂາຄະນະພັກແຕ່ລະຂັ້ນ ດັ່ງນີ້:

- ຂັ້ນກະຊວງ-ອົງການ ໃຫ້ມີຮອງເລຂາຄະນະພັກກະຊວງ-ອົງການ 1 ສະຫາຍ. ຍົກເວັ້ນກະຊວງປ້ອງກັນປະເທດ ແລະ ກະຊວງປ້ອງກັນຄວາມສະຫງົບ;
- ຂັ້ນແຂວງ-ນະຄອນຫຼວງ ແລະ ເມືອງ-ນະຄອນ ໃຫ້ມີຮອງເລຂາຄະນະພັກ 2 ສະຫາຍ.

2. ທິດເລັ່ງໃນການແບ່ງຄວາມຮັບຜິດຊອບ ຂອງຄະນະປະຈໍາພັກກະຊວງ-ອົງການ, ແຂວງ-ນະຄອນຫຼວງ ແລະ ເມືອງ-ນະຄອນ ໃຫ້ປະຕິບັດດັ່ງນີ້:

ກ. ຂັ້ນກະຊວງ-ອົງການ

1. ເລຂາຄະນະພັກກະຊວງ-ອົງການ ຄວບຕໍາແໜ່ງລັດຖະມົນຕີ ແລະ ຫົວໜ້າອົງການ ຮັບຜິດຊອບນໍາພາ-ຊີ້ນໍາວຽກງານຮອບດ້ານ ແລະ ຮັບຜິດຊອບໂດຍກົງຕໍ່ຜົນໄດ້ຜົນເສຍ ໃນການນໍາພາຈັດຕັ້ງປະຕິບັດໜ້າທີ່ການເມືອງຂອງກະຊວງ-ອົງການຕົນ;
2. ຮອງເລຂາຄະນະພັກ ຄວບຕໍາແໜ່ງຮອງລັດຖະມົນຕີ ຊ່ວຍເລຂາຄະນະພັກ ຊີ້ນໍາ ຂົງເຂດວຽກງານການເມືອງແນວຄິດ ແລະ ວຽກງານພັກ-ພະນັກງານ;
3. ກໍາມະການປະຈໍາພັກ ຄວບຕໍາແໜ່ງຮອງລັດຖະມົນຕີ ຊ່ວຍວຽກລັດຖະມົນຕີ;
4. ກໍາມະການປະຈໍາພັກ ຄວບຕໍາແໜ່ງຮອງລັດຖະມົນຕີ ຊ່ວຍວຽກລັດຖະມົນຕີ;
5. ກໍາມະການປະຈໍາພັກກະຊວງ-ອົງການ ຄວບຕໍາແໜ່ງຫົວໜ້າກົມຈັດຕັ້ງ-ພະນັກງານ ຫຼື ຫົວໜ້າກົມກວດກາກະຊວງ-ອົງການ.

ຂ. ຂັ້ນແຂວງ ແລະ ນະຄອນຫຼວງ

1. ເລຂາຄະນະພັກແຂວງ-ນະຄອນຫຼວງ ຄວບຕໍາແໜ່ງເຈົ້າແຂວງ-ເຈົ້າຄອງນະຄອນຫຼວງຮັບຜິດຊອບນໍາພາ-ຊີ້ນໍາວຽກງານຮອບດ້ານ ແລະ ຮັບຜິດຊອບໂດຍກົງຕໍ່ຜົນໄດ້ຜົນເສຍໃນການນໍາພາຈັດຕັ້ງປະຕິບັດໜ້າທີ່ການເມືອງຂອງແຂວງ-ນະຄອນຫຼວງ;
2. ຮອງເລຂາຄະນະພັກແຂວງ-ນະຄອນຫຼວງ ຄວບຕໍາແໜ່ງປະທານສະພາປະຊາຊົນຂັ້ນແຂວງ-ນະຄອນຫຼວງ;
3. ຮອງເລຂາຄະນະພັກແຂວງ-ນະຄອນຫຼວງ ຊ່ວຍເລຂາພັກແຂວງ, ນະຄອນຫຼວງ ຊີ້ນໍາ ຂົງເຂດວຽກງານການເມືອງແນວຄິດ ແລະ ວຽກງານພັກ-ພະນັກງານ;
4. ກໍາມະການປະຈໍາພັກແຂວງ ຄວບຕໍາແໜ່ງປະທານກວດກາພັກ-ລັດແຂວງ-ນະຄອນຫຼວງ;
5. ກໍາມະການປະຈໍາພັກແຂວງ ຄວບຕໍາແໜ່ງປະທານແນວລາວສ້າງຊາດແຂວງ-ນະຄອນຫຼວງ;
6. ກໍາມະການປະຈໍາພັກແຂວງ ຄວບຕໍາແໜ່ງຫົວໜ້າຄະນະຈັດຕັ້ງແຂວງ-ນະຄອນຫຼວງ;
7. ກໍາມະການປະຈໍາພັກແຂວງ ຄວບຕໍາແໜ່ງຮອງປະທານສະພາປະຊາຊົນຂັ້ນແຂວງ-ນະຄອນຫຼວງ;
8. ກໍາມະການປະຈໍາພັກແຂວງ ຄວບຕໍາແໜ່ງຮອງເຈົ້າແຂວງ ຊ່ວຍວຽກເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ຊີ້ນໍາຂົງເຂດວຽກງານເສດຖະກິດ ຫຼື ຂົງເຂດວຽກງານວັດທະນະທໍາ-ສັງຄົມ ແລະ ການປົກຄອງ;
9. ກໍາມະການປະຈໍາພັກແຂວງ ຄວບຕໍາແໜ່ງຮອງເຈົ້າແຂວງ ຊ່ວຍວຽກເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ຊີ້ນໍາຂົງເຂດວຽກງານເສດຖະກິດ ຫຼື ຂົງເຂດວຽກງານວັດທະນະທໍາ-ສັງຄົມ ແລະ ການປົກຄອງ;
10. ກໍາມະການປະຈໍາພັກແຂວງ ຄວບຕໍາແໜ່ງຫົວໜ້າ ປກຊ ແຂວງ-ນະຄອນຫຼວງ;
11. ກໍາມະການປະຈໍາພັກແຂວງ ຄວບຕໍາແໜ່ງຫົວໜ້າ ປກສ ແຂວງ-ນະຄອນຫຼວງ;

12. ກຳມະການປະຈຳພັກແຂວງ ຄວບຕຳແໜ່ງຫົວໜ້າຄະນະໂຄສະນາອົບຮົມແຂວງ, ນະຄອນຫຼວງ;

13. ກຳມະການປະຈຳພັກແຂວງ ຄວບຕຳແໜ່ງເລຂາພັກເມືອງເທດສະບານ-ນະຄອນ.

ຄ. ຂັ້ນເມືອງ-ນະຄອນ

1. ເລຂາພັກເມືອງ ຄວບຕຳແໜ່ງເຈົ້າເມືອງ-ເຈົ້ານະຄອນ ຮັບຜິດຊອບນຳພາ-ຊີ້ນຳວຽກງານຮອບດ້ານ ແລະ ຮັບຜິດຊອບໂດຍກົງ ຕໍ່ຜົນໄດ້ຜົນເສຍໃນການນຳພາຈັດຕັ້ງປະຕິບັດໜ້າທີ່ການເມືອງຂອງເມືອງ-ນະຄອນ;

2. ຮອງເລຂາພັກເມືອງ ຊ່ວຍເລຂາຄະນະພັກ ຊີ້ນຳວຽກງານການເມືອງແນວຄິດ ແລະ ວຽກງານພັກ-ພະນັກງານ;

3. ຮອງເລຂາພັກເມືອງ ຄວບຕຳແໜ່ງປະທານກວດກາພັກ-ລັດເມືອງ-ນະຄອນ, ທັງເປັນສະມາຊິກສະພາຂັ້ນແຂວງ;

4. ກຳມະການປະຈຳພັກເມືອງ ຄວບຕຳແໜ່ງປະທານແນວລາວສ້າງຊາດເມືອງ-ນະຄອນ;

5. ກຳມະການປະຈຳພັກເມືອງ ຄວບຕຳແໜ່ງຫົວໜ້າຄະນະຈັດຕັ້ງເມືອງ-ນະຄອນ;

6. ກຳມະການປະຈຳພັກເມືອງ ຄວບຕຳແໜ່ງຮອງເຈົ້າເມືອງ-ນະຄອນ;

7. ກຳມະການປະຈຳພັກເມືອງ ຄວບຕຳແໜ່ງຫົວໜ້າ ປກຊ ເມືອງ-ນະຄອນ;

8. ກຳມະການປະຈຳພັກເມືອງ ຄວບຕຳແໜ່ງຫົວໜ້າ ປກສ ເມືອງ-ນະຄອນ;

9. ກຳມະການປະຈຳພັກເມືອງ ຄວບຕຳແໜ່ງຫົວໜ້າຄະນະໂຄສະນາອົບຮົມເມືອງ-ນະຄອນ.

3. ວິທີຈັດຕັ້ງປະຕິບັດ

1. ຄະນະບໍລິຫານງານພັກ, ຄະນະປະຈຳພັກກະຊວງ-ອົງການ, ຄະນະປະຈຳພັກແຂວງ-ນະຄອນຫຼວງ, ແລະ ເມືອງ-ນະຄອນ ຕ້ອງຄົ້ນຄວ້າ, ເຊື່ອມຊຶມ ແລະ ກຳແໜ້ນ ຄຳສັ່ງແນະນຳສະບັບນີ້ໃຫ້ເລິກເຊິ່ງ ພ້ອມທັງຈັດຕັ້ງປະຕິບັດໃຫ້ຖືກຕ້ອງ ແລະ ເຂັ້ມງວດ;

2. ໃນໄລຍະກະກຽມ ແລະ ດຳເນີນກອງປະຊຸມໃຫຍ່ອົງຄະນະພັກຂັ້ນຕົ້ນ ຕ້ອງໄດ້ຄົ້ນຄວ້າຄາດຄະເນການສັບຊ້ອນຈັດວາງບຸກຄະລາກອນໄປຕາມທິດດັ່ງກ່າວ;

3. ຄຳສັ່ງແນະນຳສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ຄະນະເລຂາທິການສູນກາງພັກ

ຜູ້ປະຈຳການ

ພັນຄຳ ວິພາວັນ